ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ນາຍົກລັດຖະມົນຕີ ສສ ຫວຽດນາມ ຕ້ອນຮັບການ ຢ້ຽມຂໍ່ານັບຂອງຄະນະຜູ້ແທນຂັ້ນສູງ ທຫລ



ຄະນະຜູ້ແທນຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ ຊຶ່ງນໍາໂດຍທ່ານ ສອນໄຊ ສິດພະໄຊ ກໍາມະການສໍາຮອງສູນກາງພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກຮ່ວມກັບການນໍາຂັ້ນສູງຂອງທະນາຄານແຫ່ງລັດ ສສ ຫວຽດນາມ ທີ່ນະຄອນຫຼວງ ຮ່າໂນ້ຍ ລະຫວ່າງ ວັນທີ 7 ຫາວັນທີ 10 ມັງກອນ 2019 ແລະ ໃນໂອກາດດັ່ງກ່າວ ຄະນະຜູ້ແທນຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ຫງວຽນ ຊວນ ຟຸກ ກໍາມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ນາຍົກລັດຖະມົນຕີແຫ່ງ ສສ ຫວຽດນາມ ທີ່ຫ້ອງປະຊຸມຂອງທະນາຄານແຫ່ງລັດ ສສ ຫວຽດນາມ ໃນວັນທີ 9 ມັງກອນ 2019.

ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງສປປ ລາວ ກໍ່ໄດ້ກ່າວສະແດງຄວາມເຄົາລົບນັບຖືຢ່າງສູງມາຍັງທ່ານນາຍົກລັດຖະມົນຕີແຫ່ງ ສສ ຫວຽດນາມ ແລະ ພ້ອມທັງໄດ້ລາຍງານຜົນຂອງກອງປະຊຸມພົບປະ ແລະ ແລກປ່ຽນບົດຮຽນລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງ ລັດ ສສ ຫວຽດນາມ ຊຶ່ງໄດ້ຮັບຜົນສໍາເລັດອັນຈົບງາມ ແລະ ຂະນະດຽວກັນ ຍັງໄດ້ຖືເອົາ ສສ ຫວຽດນາມ ເປັນປະເທດທໍາອິດໃນການເຄື່ອນໄຫວ ແລະ ເຮັດວຽກຂອງຕົນພາຍຫຼັງທີ່ໄດ້ມີການຮັບຮອງເປັນຜູ້ວ່າການທະນາຄານແຫ່ງ ສປປ ລາວ ຈາກກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໃນທ້າຍປີ 2018 ຜ່ານມານີ້.



ໃນໂອກາດດັ່ງກ່າວ; ທ່ານ ຫງວຽນ ຊວນຟຸກ ນາຍົກລັດຖະມົນຕີແຫ່ງ ສສ ຫວຽດນາມ ໄດ້ສະແດງຄວາມຍິນດີຕ້ອນຮັບ ຄະນະຜູ້ແທນຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ ແລະ ຍັງໄດ້ອວຍພອນໃຫ້ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຄົນໃໝ່ ຈົ່ງປະສົບຜົນສໍາເລັດໃນໜ້າທີ່ການງານໃໝ່ ແລະ ປະກອບສ່ວນເຂົ້າໃນການພົວພັນ ແລະ ຮ່ວມມືລະຫວ່າງ ທະນາຄານກາງຂອງ 2 ປະເທດໃຫ້ກ້າວສູ່ລວງເລິກຍິ່ງໆຂຶ້ນ.

**# ຂ່າວ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ